ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 3874/ກປ

ນະຄອນຫຼວງວຽງຈັນ, ວັນທີ 05 DEC 2012

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ກ່ຽວກັບການຜັນຂະຫຍາຍການຈັດຕັ້ງປະຕິບັດແຜນການ ຕາມວຽກງານຈຸດສຸມຂອງລັດຖະບານ ແລະ ຂອງກະຊວງ ກະສິກຳ ແລະ ປ່າໄມ້

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 262/ນຍ, ລົງວັນທີ 28/06/2012 ວ່າດ້ວຍການ ຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງ ກະສິກຳ ແລະ ປ່າໄມ້.
- ອີງຕາມ ບົດແນະນຳຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 2893/ກປ, ລົງວັນທີ 16/11/2012 ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ສົກປີ 2012-2013 ແລະ ການກະກຽມ ສ້າງແຜນການ ແລະ ແຜນງົບປະມານ ສົກປີ 2013-2014 ຂອງຂະແໜງການກະສິກຳ ແລະ ປ່າໄມ້.
- ອີງຕາມຄຳແນະນຳຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 2071/ກປ. ລົງວັນທີ 05 /9/2012 ກ່ຽວກັບການທົດລອງສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາຂອງຂະແໜງກະສິກຳ ແລະ ປ່າໄມ້.

ເພື່ອຈັດຕັ້ງປະຕິບັດແຜນການ ແລະ ແຜນງົບປະມານຂອງ ກະຊວງກະສິກຳ ແລະ ປ່າໄມ້ ສົກປີ 2012-2013 ແລະ ແຜນການໃນຊຸມປີຕໍ່ໜ້າຢ່າງມີຈຸດສຸມ ໂດຍສະເພາະໃນການພັດທະນາເຂດຈຸດສຸມຂອງລັດຖະບານ ແລະ ຈຸດສຸມວຽກງານ 3 ສ້າງ ຕາມໜ້າວຽກຂອງ ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບ ໃຫ້ປະກົດຜົນເປັນຈິງ ແລະ ມີປະສິດທິພາບ.

ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ຕົກລົງ:

ມາດຕາ 1. ໃຫ້ບັນດາກົມ, ສະຖາບັນ ທັງໂຄງການ ແລະ ກິດຈະກຳໂຄງການລົງທຶນຂອງລັດ, ໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ, ກອງທຶນພັດທະນາ (ປ່າໄມ້, ນ້ຳເທີນ 2) ສົກປີ 2012-2013 ທີ່ໄດ້ຮັບອະນຸມັດຢູ່ໃນການຄຸ້ມຄອງຂອງຕົນ ໃຫ້ໄປຕາມເຂດຈຸດສຸມຂອງລັດຖະບານ ແລະ ຈຸດສຸມວຽກງານຂອງກະຊວງກະສິກຳ ແລະ ປ່າໄມ້ ວາງອອກ ພ້ອມທັງໃຫ້ຕິດພັນກັບວຽກງານ 3 ສ້າງ.

ມາດຕາ 2. ໃຫ້ບັນດາກົມ, ສະຖາບັນ, ຫ້ອງການກອງທຶນ ແລະ ໂຄງການ ຈັດສັນງົບປະມານປົກກະຕິຂອງຕົນລົງສູ່ເຂດຈຸດສຸມ: ບັນດາກົມ ແລະ ສະຖາບັນ ຢ່າງໜ້ອຍ ບ່ອນລະ 100 ລ້ານກີບ, ກອງທຶນພັດທະນາປ່າໄມ້ ( ກົມປ່າໄມ້ ) 800 ລ້ານກີບ, ພ້ອມນີ້ ໃຫ້ລະດົມເງິນຈາກໂຄງການຊ່ວຍເຫຼືອລ້າ ຫຼື ກູ້ຢືມ ຕາມຄວາມເໝາະສົມ ເພື່ອເຄື່ອນໄຫວລົງສູ່ເຂດຈຸດສຸມຂອງລັດຖະບານ ທີ່ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບລົງເລິກຊີ້ນຳ (ຈຸດສຸມຜາລະແວກ ເມືອງຮົ່ມ, ຈຸດສຸມເມື່ອງອ່າວ ເຂດເມືອງໄຊສົມບູນ ແຂວງວຽງຈັນ, ຈຸດສຸມສັນຫຼວງ ແລະ ຈຸດສຸມນ້ຳສຽມ ແຂວງຊຽງຂວາງ) ພ້ອມທັງການເຮັດທົດລອງວຽກງານ 3 ສ້າງ ຕາມເປົ້າໝາຍຂອງແຂວງ ແລະ ເມືອງ ໃນທົ່ວປະເທດ ໃຫ້ປະກົດຜົນເປັນຈິງ.

- ສຳລັບງົບປະມານບ້ວງລົງຈຸດສຸມ ແລະ ວຽກງານ 3 ສ້າງ ຈຳນວນ 1.800 ລ້ານກີບ: ມອບໃຫ້ຫ້ອງການກະຊວງສົມທົບກັບ ກົມແຜນການ ແລະ ການຮ່ວມມື ເປັນໃຈກາງໃນການອຳນວຍຄວາມສະດວກ, ອອກບົດແນະນຳສະເພາະໃນການຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບທາງດ້ານລະບຽບການເງິນ ແລະ ນະໂຍບາຍຕໍ່ທີມງານລົງເຮັດວຽກຂອງບັນດາກົມ ແລະ ສະຖາບັນ.
- ສຳລັບບ້ວງເງິນນ້ຳເທີນ 2 ຈຳນວນ 1.500 ລ້ານກີບ: ມອບໃຫ້ກົມແຜນການ ແລະ ການຮ່ວມມື ເປັນໃຈກາງສົມທົບກັບກົມກວດກາປ່າໄມ້, ກົມປ່າໄມ້ ແລະ ກົມສົ່ງເສີມ ແລະ ສະຫະກອນ ຈັດສັນງົບປະມານ: ໃນນັ້ນ 500 ລ້ານກີບ ແມ່ນສຸມໃສ່ການເຄື່ອນໄຫວວຽກງານວິຊາການດ້ານການກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ສັດນ້ຳ ແລະ ສັດປ່າ ຢູ່ບັນດາເມືອງ 3 ສ້າງ, ສຳລັບ 1.000 ລ້ານກີບ ແມ່ນສຸມໃສ່ປັບປຸງບັນດາສູນບໍລິການເຕັກນິກກະສິກຳ ຢູ່ບັນດາເມືອງ 3 ສ້າງ ໂດຍໃຫ້ມີການກະຈາຍລົງສູ່ແຕ່ລະພາກ ( ພາກເໜືອ, ພາກກາງ ແລະ ພາກໃຕ້).

ມາດຕາ 3. ໃຫ້ບັນດາກົມ, ສະຖາບັນ ແລະ ຫ້ອງການກອງທຶນພັດທະນາປ່າໄມ້ ແລະ ໂຄງການ ສົມທົບກັບຫ້ອງການພັດທະນາ ກະສິກຳ ແລະ ປ່າໄມ້ ເຂດຈຸດສຸມ ກົມສົ່ງເສີມ ແລະ ສະຫະກອນ ເພື່ອສ້າງເປັນແຜນກິດຈະກຳ ແລະ ແຜນງົບປະມານຂອງແຕ່ລະພາກສ່ວນເພື່ອໃຫ້ມີການເຊື່ອມໂຍງກັນ ແລະ ສາມາດຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

ມາດຕາ 4. ມອບໃຫ້ກົມແຜນການ ແລະ ການຮ່ວມມື ເປັນໃຈກາງໃນການຊີ້ນຳ, ປະສານສົມທົບ ແລະ ອຳນວຍຄວາມສະດວກທາງດ້ານວິຊາການແຜນການ ແລະ ການເງິນ ພ້ອມທັງຊຸກຍູ້ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຕົວຈິງໃນແຕ່ລະໄລຍະ ຂອງພາກສ່ວນທີ່ກ່ຽວຂ້ອງ.

ມາດຕາ 5. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້

ວິໄລວັນ ພົມເຂ